**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 29 ພຶສຈິກາ 2009 (11-29-2009)**

---

**<u>ຮູ້ຈັກທີ່ຈະຖ່ອມຕົວ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ຢາໂກໂບ 4:1-17)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ກ່ຽວກັບໝາກຜົນຂອງຄວາມກົງກັນຂ້າມ, ການອວດອີ່ງທະນົງຕົວ ແລະ ຜົນດີໃນການຖ່ອມຕົວ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ການອວດອີ່ງທະນົງຕົວ ແລະການຖ່ອມຕົວເປັນຜົນສະທ້ອນຄວາມສັມພັນຕໍ່ຊີວິດ. ການອວດອີ່ງທະນົງຕົວເຮັດໃຫ້ຄວາມສັມພັນຂອງພວກເຮົາກັບຄົນອື່ນແລະຕໍ່ພຣະເຈົ້າພັງທະລາຍ, ການຖ່ອມຕົວໄດ້ເຮັດໃຫ້ຄວາມສັມພັນແໜ້ນແຟ້ນຂຶ້ນ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ທ່ານຈະຖືກທ້າທາຍໃຫ້ເຫັນຄວາມສຳຄັນໃນການຖ່ອມຕົວ ແລະລະຖິ້ມຄວາມອວດອີ່ງທະນົງຕົວ ຟື້ນຟູຄວາມສັມພັນທີ່ຂາດຫາຍໄປໃຫ້ກັບມາເປັນປົກກະຕິ ແລະປັບປຸງຄວາມສັມພັນໃຫ້ດີຂຶ້ນ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: ບົດຮຽນນີ້ເປັນບົດຮຽນພາກສຸດທ້າຍທີ່ໄດ້ຄັດເລືອກອອກມາຈາກພຣະທັມຢາໂກໂບ. ສລຸບສັ້ນໆຊຶ່ງເປັນການທົບທວນໃຫ້ເຫັນເຖິງທັງສີ່ບົດຮຽນທີ່ໄດ້ຮຽນຜ່ານມາ.

- ຂໍໃຫ້ນັກຮຽນສົນທະນາກັນຈັກນ່ອຍວ່າພຣະຄັມພີໄດ້ສອນຫຍັງແດ່ໃນການດຳເນີນຊີວິດແຕ່ລະວັນ ທີ່ເຂົາເຈົ້າໄດ້ຂັບຕາມຊຶ່ງບໍ່ແມ່ນການໄດ້ຍິນລ້າໆ. ຢາໂກໂບມີອີກສິ່ງນຶ່ງທີ່ຈະສອນພວກເຮົາອາທິດນີ້. ລາວແນະນຳພວກເຮົາໃຫ້ຮູ້ຈັກຄວາມຖ່ອມຕົວ.
- ໃນຄວາມຖ່ອມຕົວຂອງໂລກນັບມື້ນັບລົດນ້ອຍຖອຍລົງ, ແຕ່ຄວາມຖ່ອມຕົວຂອງຄຣິສຕຽນບໍ່ໄດ້ລົດລົງ ແຕ່ກັບເພີ້ມຫລາຍຂຶ້ນ. "ຄວາມຖ່ອມຕົວບໍ່ແມ່ນອຸດົມຄະຕິ, ແຕ່ແມ່ນການສະແດງອອກຂອງຊີວິດທີ່ຖືກຕ້ອງຊຶ່ງບໍ່ຮູ້ສິ້ນສຸດໂດຍມາຈາກພຣະເຈົ້າ"

1. **ການທະນົງຕົວມີຜົນຫຍັງກັບພວກເຮົາ?**: (ຢາໂກໂບ 4:1-5)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 4:1-5
- ຢາໂກໂບໄດ້ໃຫ້ໂຄງຮ່າງນ້ຳເບີຂອງບັນຫາຕ່າງໆກັບການກະທຳຂອງຄົນ.
- ຄຳຖາມ: ແມ່ນຫຍັງທີ່ກໍ່ໃຫ້ເກີດມີບັນຫາຕ່າງໆເຂົ້າມາໃນຕົວຄົນ ແລະໃນໂລກ? ຄຳຕອບ. ຄວາມອວດອົ່ງທະນົງຕົວ. ຄຳວ່າອວດອົ່ງທະນົງຕົວ ແລະຄວາມທີ່ໜ້າພູມໃຈບໍ່ໄດ້ປາກົດອອກໃນຂໍ້ທີ 1-5 , ແຕ່ຂໍ້ທີ 6 ມີຄຳທີ່ໜ້າພາກພູມໃຈຢູ່.
- ການອ່ານພຣະທັມຢາໂກໂບກັບໄປກັບມາຫລາຍເທື່ອ, ພວກເຮົາໄດ້ເຫັນວ່າລາວໄດ້ເວົ້າກັບຜູ້ທີ່ອ່ານຂອງລາວ ເຫັນວ່າລາວເໝືອນກັບ "ອ້າຍ, ນ້ອງຊາຍ".
- ຢາໂກໂບເອີ້ນບັນດາຜູ້ທີ່ອ່ານພຣະທັມຂອງລາວໃນຂໍ້ທີ 4 ນັ້ນວ່າແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (ຢາໂກໂບ 4:1-5)

1. ຢາໂກໂບຖາມວ່າ, ອັນໃດ ເປັນສາເຫດການຜິດຖຽງກັນ ແລະອັນໃດເປັນສາເຫດຂອງການທະເລາະວິວາດກັນໃນພວກເຈົ້າ? ທ່ານຈະຕອບຄຳຖາມນັ້ນວ່າຢ່າງໃດ?
2. ເປັນເພາະເຫດໃດຄົນທັງຫລາຍຈຶ່ງບໍ່ໄດ້ຮັບຕາມທີ່ເຂົາເຈົ້າທູນຂໍຈາກພຣະເຈົ້າ?
3. ອັນຕະລາຍຂອງການເປັນ "ເພື່ອນກັບໂລກ" ນັ້ນແມ່ນຫຍັງ?
4. ແມ່ນຫຍັງທີ່ພາໃຫ້ເກີດຄວາມປາຖນາພຣະວິນຍານບໍຣິສຸດຢ່າງແຮງກ້າ?

2. **ການຖ່ອມຕົວມີຜົນອັນໃດໃຫ້ແກ່ພວກເຮົາ?**: (ຢາໂກໂບ 4:6-12)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 4:6-12
- **ການຖ່ອມຕົວ,**ຄຳອ້າງອີງນີ້ມີສ່ວນກ່ຽວຂ້ອງກັບພຣະທັມຢາໂກໂບ 4:6 ແນວໃດ? ອີກປະການນຶ່ງກໍໄດ້ສະແດງໃຫ້ເຫັນວ່າໂລກໄດ້ດູຖູກ ກຽດຊັງການຖ່ອມຕົວ- ຊຶ່ງເປັນດັ່ງພຣະເຈົ້າໄດ້ຊົງກ່າວໄວ້ຢ່າງແນ່ນອນ.
- ຜູ້ທີ່ຂຽນພຣະຄັມພີຄົນອື່ນໆກໍໄດ້ຂຽນເຣື່ອງການຖ່ອມຕົວດ້ວຍເຊັ່ນດຽວກັນ. ໃຫ້ມີຜູ້ອາສາສມັກອ່ານພຣະທັມ ເອຊາຢາ 66:2; ເສຟັນຢາ 2:3; ມັດທາຍ 18:4; ລູກາ 14:11; ຟີລິບປອຍ 2:7-8; 1ເປໂຕ 5:5-6. ຊຶ່ງຊີ້ໃຫ້ເຫັນວ່າພວກເຮົາບໍ່ມີແຕ່ຄຳແນະນຳຈາກພຣະເຢຊູເທົ່ານັ້ນ ແຕ່ໄດ້ເຫັນແບບຢ່າງຂອງພຣະອົງພ້ອມ.
- ໃນຂໍ້ພຣະທັມຕ່າງໆ ເຫລົ່ານີ້, ຢາໂກໂບໄດ້ໃຫ້ຄຳອະທິບາຍຢ່າງໃດແດ່ໃນການຖ່ອມຕົວຂອງພວກເຮົາເອງກ່ອນຈະໄດ້ຮັບພຣະຄຸນແຫ່ງຣິດທານຸພາບຂອງພຣະອົງ?
- ຢາໂກໂບ 4:7-10 ການຖ່ອມຕົວສາມາດເຮັດໃຫ້ພວກເຮົາຢູ່ໃນກົດເກນຂອງພຣະບັນຍັດສິບປະການ.
- ອ່ານພຣະທັມຢາໂກໂບ 4:11-12 ອີກ ອັນນີ້ກໍໄດ້ຊີ້ອອກເຖິງການບໍ່ປ່ຽນແປງຄືກັນກັບການສິດສອນຂອງພຣະເຢຊູຄຣິດ ອ່ານມັດທາຍ 7:1-5.
- ໃນຂໍ້ທີ 9 ເປັນຄຳສັ່ງຊຶ່ງກ່ຽວພັນກັບລັກສະນະທີ່ໃຫ້ເວລາໃນການກັບໃຈ. ທີ່ນີ້ ເປັນການຈັດຕຽມເວລາໃຫ້ຢ່າງຊັດເຈນສຳລັບທຸກສິ່ງ.ໃຫ້ຜູ້ນຶ່ງອາສາສມັກອ່ານພຣະທັມ ປັນຍາຈານ 3:1-8.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ຢາໂກໂບ 4:6-12

1. ເຮັດແນວໃດພວກເຮົາຈຶ່ງຈະມີປະສົບປະການກ່ຽວກັບພຣະຄຸນຂອງພຣະເຈົ້າໄດ້?
2. ນິສັຍໃຈຄໍທີ່ອວດອົ່ງທະນົງຕົວທີ່ກີດກັ້ນຄວາມເຊື່ອຈາກການຮັບເອົາພຣະຄຸນອັນລົ້ນເລີດຂອງພຣະເຈົ້າເດພວກເຮົາຈະເຮັດແນວໃດກັບມັນ?
3. "ມື" ແລະ "ຫົວໃຈ" ທີ່ປາກົດຢູ່ໃນຂໍ້ 8 ນັ້ນເປັນຕົວແທນສິ່ງໃດ?
4. ໃນເມື່ອມີຄົນເຂັ້ມແຂງຫລາຍຄົນຢູ່ໃນໂບດຈະມີຫຍັງເກີດຂຶ້ນ?
5. ຄຣິສຕຽນເຫລົ່ານີ້ສາມາດຫັນປ່ຽນຈາກການອວດອົ່ງ ແລະມາຝຶກຝົນການຖ່ອມຕົວໃນທຳງານຢູ່ໃນຖ້ານກາງໂລກ-ໃນກິຈການງານທຸຣະກິຈດໃນຊີວິດເພື່ອເປັນແບບຢ່າງໄດ້ບໍ່?

3 . **<u>ພຣະເຈົ້າຊົງມີພຣະປະສົງຫຍັງໃນພວກເຮົາ?:</u>** (ຢາໂກໂບ 4:13-17)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 4:13-17
- ພວກເຮົາທຸກຄົນກ່ອນຈະເຮັດຫຍັງຕ້ອງເຮັດຕາຕະລາງແຜນການເປັນພື້ນຖານ. ຖ້າພວກເຮົາບໍ່ໄດ້ວາງແຜນການ, ພວກເຮົາກໍຈະບໍ່ພົບກັບຄວາມສຳເຣັດໄດ້ຈັກຢ່າງ, ເໝືອນກັບການເວົ້າຫລາຍລ້າໆ (ບໍ່ເຮັດຫຍັງ)
- ຂໍໃຫ້ຜູ້ນຶ່ງອ່ານຢາໂກໂບ 4:17 ອີກເທື່ອນຶ່ງ. ແມ່ນອັນໃດເປັນຕົວຢ່າງສິ່ງທີ່ດີບາງຢ່າງທີ່ພວກເຮົາຍັງຂາດຢູ່ຊຶ່ງບໍ່ໄດ້ເຮັດເພາະພວກເຮົາຕິດທຸຣະຫຍຸ້ງຢູ່ກັບແຜນການທີ່ພວກເຮົາວາງໄວ້ ຫລືຕັ້ງໃຈຢາກໃຫ້ໄດ້ຕາມເປົ້າໝາຍ ກຳນົດທີ່ພວກເຮົາຕັ້ງໄວ້.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຢາໂກໂບ 4:13-17

1. ອັນຕະລາຍໃນການເຮັດແຜນການທີ່ບໍ່ເພິ່ງພຣະເຈົ້າແລ້ວຈະມີຫຍັງເກີດຂຶ້ນ?
2. ພວກເຮົາຈະເຮັດແຜນການໂດຍການເພິ່ງພາອາສັຍພຣະເຈົ້າແນວໃດ?
3. ຄຣິສຕຽນດຳຣົງຊີວິດຕາມແຜນການຂອງເຂົາເຈົ້າພ້ອມທັງເວລາປະຕິບັດທຸກສິ່ງທີ່ດີທີ່ພຣະເຈົ້າຊົງມີພຣະປະສົງໃຫ້ພວກເຮົາເຮັດໄດ້ແນວໃດ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ໃນເມື່ອພວກເຮົາກຳຈັດຄວາມທະນົງຕົວອອກ, ການຂັດແຍ້ງກັນກໍເປັນສິ່ງທີ່ຫລີກລ່ຽງບໍ່ໄດ້.
- ວິທີການຮັກສາການຂັດແຍ້ງໃນໂບດແມ່ນການຍອມສາຣະພາບ ແລະການຍອມເຊື່ອຟັງພຣະເຈົ້າ.
- ຄວາມອວດອົ່ງທະນົງຕົວນຳພາໃຫ້ບິດເບືອນໃນການທີ່ບໍ່ເຂົ້າໃຈຂອງການອະທິຖານ.
- ພຣະເຈົ້າຈະສຳແດງສິ່ງສຳຄັນຫລາຍປະການຫລາຍກວ່າແຜນການຂອງພວກເຮົາ. ພວກເຮົາຕ້ອງການສແວງຫາທຳຕາມພຣະປະສົງຂອງພຣະເຈົ້າ ແລະແຜນການຂອງພຣະອົງສຳລັບຊີວິດຂອງພວກເຮົາ.
- ນັກທຸຣະກິຈທີ່ເປັນຄຣິສຕຽນຕ້ອງຈົດຈຳແລະໃຫ້ພຣະເຈົ້າເປັນນຶ່ງໃນທຸກກິຈການທີ່ເຂົາເຈົ້າເຮັດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**